ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຍທຂ
PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມເຄຫາ ແລະ ຜັງເມືອງ

ເລກທີ: 104 /ຍທຂ.ກຄຜ

ລົງວັນທີ: 01 ເມສາ 2019

# ການແບ່ງຄວາມຮັບຜິດຊອບ ວຽກງານວິຊາສະເພາະຕາມທິດສາມສ້າງ
# ລະຫວ່າງ ກົມເຄຫາ-ຜັງເມືອງ ກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ

| ກົມເຄຫາ ແລະ ຜັງເມືອງຮັບຜິດຊອບ | ພະແນກ ຍທຂ ແຂວງ ແລະ ນະຄອນຫລວງວຽງຈັນ ຮັບຜິດຊອບ |
|---|---|
| 1) ຄົ້ນຄ້ວາສ້າງ ແລະ ປັບປຸງບັນດາກົດໝາຍ, ລະບຽບການ, ມາດຕະຖານເຕັກນິກ, ບົດແນະນຳ ແລະ ນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງຕ່າງໆ, ວາງນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາ ຂອງຂະແໜງເຄຫາ ແລະ ຜັງເມືອງ ໃນຂອບເຂດທົ່ວປະເທດ ເພື່ອຮັບໃຊ້ໃຫ້ແກ່ການຄຸ້ມຄອງ ແລະ ການພັດທະນາ ຂອງຂະແໜງການຂອງຕົນ; | 1) ຜັນຂະຫຍາຍ ກົດໝາຍ, ລະບຽບການ, ມາດຕະຖານເຕັກນິກ, ມະຕິ, ຄຳສັ່ງຕ່າງໆ ເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານວິຊາສະເພາະ ຂອງຂະແໜງເຄຫາ ແລະ ຜັງເມືອງ ໃນຂອບເຂດຮັບຜິດຊອບຂອງຕົນ, ສ້າງແຜນງານ ແລະ ກຳນົດໂຄງການລະອຽດ ຕາມຍຸດທະສາດ ແລະ ແຜນການ ຂອງທ້ອງຖິ່ນຕົນ ເພື່ອການຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ; |
| 2) ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາເປັນແຜນງານ, ໂຄງການ ແລະ ກິດຈະການລະອຽດ ແລະ ໂຄສະນາເຜີຍແຜ່ໃຫ້ທົ່ວເຖິງ, ສ້າງກົນໄກ ໃນການຈັດຕັ້ງປະຕິບັດວຽກງານ, ຄຸ້ມຄອງໂຄງການລົງທຶນ ແລະ ກໍ່ສ້າງ, ຕິດຕາມກວດກາ, ປະເມີນຜົນ, ສະຫຼຸບຕີລາຕາ ແລະ ຖອດຖອນບົດຮຽນ; | 2) ເປັນເຈົ້າການຂົນຂວາຍແຫຼ່ງທຶນເຂົ້າໃນການຈັດຕັ້ງປະຕິບັດ ແຜນງານ, ໂຄງການ ແລະ ກິດຈະການ ຕ່າງໆ, ຕິດຕາມກວດກາ, ປະເມີນຜົນ, ສະຫຼຸບຕີລາຄາ, ຊຸກຍູ້, ຖອດຖອນບົດຮຽນ, ພົວພັນ ແລະ ປະສານສົມທົບກັບຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານ ແລະ ໂຄງການທີ່ຕົນຮັບຜິດຊອບໃຫ້ໄດ້ດີ ເພື່ອຮັບປະກັນທາງດ້ານຄຸນພາບ ແລະ ຄວາມໂປ່ງໃສ ຂອງວຽກງານ; |
| 3) ປຸກລະດົມຂົນຂວາຍແຫຼ່ງທຶນ, ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອລ້າ ແລະ ກູ້ຢືມ ໃນຮູບແບບຕ່າງໆ, ພ້ອມທັງສົ່ງເສີມທຸກພາກສ່ວນເສດຖະກິດລົງທຶນ ພັດທະນາ ແລະ ກໍ່ສ້າງດ້ານເຄຫາ ແລະ ຜັງເມືອງ; | 3) ຄຸ້ມຄອງ ບັນດາໂຄງການ ລົງທຶນ ແລະ ກໍ່ສ້າງ ດ້ານເຄຫາ ແລະ ຜັງເມືອງ ທີ່ນອນໃນຂອບເຂດຄວາມຮັບຜິດຊອບຂອງຕົນ; |
| 4) ຄຸ້ມຄອງມະຫາພາກ ກ່ຽວກັບວຽກງານການສຳຫຼວດ-ອອກແບບ ເຄຫາສະຖານ, ຄວບຄຸມການປຸກສ້າງ, ສົ່ງເສີມການພັດທະນາທີ່ຢູ່ອາໃສ, ການວາງແຜນຜັງເມືອງ, ການພັດທະນາຕົວເມືອງ ແລະ ການປັບປຸງສິ່ງແວດລ້ອມຕົວເມືອງ; | 4) ຄຸ້ມຄອງ ການສຳຫຼວດ-ອອກແບບ ເຄຫາສະຖານ, ຄວບຄຸມການປຸກສ້າງ, ສົ່ງເສີມການພັດທະນາທີ່ຢູ່ອາໃສ, ການວາງຜັງເມືອງ, ການພັດທະນາຕົວ ເມືອງ ແລະ ການປັບປຸງສິ່ງແວດລ້ອມຕົວເມືອງ, ການຈັດສັນເຂດຊຸມຊົນ ແລະ ກຸ່ມບ້ານພັດທະນາ ໃນຂອບເຂດຮັບຜິດຊອບຂອງຕົນ; |
| 5) ປະກອບຄຳເຫັນດ້ານວິຊາການກ່ຽວກັບ ການລົງທຶນ ໃນຂະແໜງເຄຫາ ແລະ ຜັງເມືອງ ແລະ ໂຄງການກໍ່ສ້າງທີ່ນຳໃຊ້ງົບປະມານຂອງລັດ ທີ່ກະຊວງ ແລະ ອົງການລັດຂັ້ນສູນກາງຄຸ້ມຄອງ; | 5) ຄຸ້ມຄອງ ບັນດາຫົວໜ່ວຍທຸລະກິດ ແລະ ວິສາຫະກິດ ທີ່ດຳເນີນທຸລະກິດດ້ານເຄຫາ ແລະ ຜັງເມືອງ, ການສ້າງຕັ້ງ ແລະ ຍຸບເລີກບັນດາຫົວໜ່ວຍທຸລະກິດ, ປະກອບຄຳເຫັນດ້ານວິຊາການ ຕໍ່ໂຄງການກໍ່ສ້າງ ທີ່ນຳໃຊ້ງົບປະມານຂອງລັດ ໃນຂອບເຂດທີ່ຮັບຜິດຊອບຂອງຕົນ; |

| | |
|---|---|
| 6) ພັດທະນາບຸກຄະລາກອນ ແລະ ກົງຈັກການຈັດຕັ້ງ ໃຫ້ແທດເໝາະກັບພາລະບົດບາດ ແລະ ໜ້າທີ່ວຽກງານ ຂອງຂະແໜງການ ຂອງຕົນ ແລະ ຊ່ວຍພັດທະນາບຸກຄະລາກອນໃຫ້ທ້ອງຖິ່ນ; | 6) ພັດທະນາບຸກຄະລາກອນ ແລະ ກົງຈັກການຈັດຕັ້ງ ໃຫ້ແທດເໝາະກັບພາລະບົດບາດ ແລະ ໜ້າທີ່ວຽກງານ ຂອງຂະແໜງການ ໃນຂອບເຂດຮັບຜິດຊອບຂອງຕົນ; |
| 7) ເກັບກຳ ສັງລວມ ແລະ ຄຸ້ມຄອງສະຖິຕິ, ຂໍ້ມູນ, ສ້າງຖານຂໍ້ມູນ ຂອງຂະ ແໜງການໃນທົ່ວປະເທດ, ຄຸ້ມຄອງ ແລະ ຂຶ້ນແຜນ ນຳໃຊ້ງົບປະມານ ທີ່ລັດຖະບານອະນຸມັດ; | 7) ເກັບກຳສະຖິຕິ ແລະ ສ້າງຖານຂໍ້ມູນ ກ່ຽວກັບ ວຽກງານເຄຫາ ແລະ ຜັງເມືອງ ໃນຂອບເຂດຮັບຜິດຊອບຂອງຕົນ; |
| 8 ) ຄົ້ນຄ້ວາເຜີຍແຜ່ວິທະຍາສາດ ແລະ ເຕັກໂນໂລຊີໃໝ່ ເພື່ອນຳໃຊ້ເຂົ້າໃນວຽກງານຂະແໜງການເຄຫາ ແລະ ຜັງເມືອງ ໃນຂອບເຂດທົ່ວປະເທດ; | 8) ເຜີຍແຜ່ ແລະ ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີໃໝ່ ເຂົ້າໃນວຽກງານຂະແໜງເຄຫາ ແລະ ຜັງເມືອງ ໃນຂອບເຂດຮັບຜິດຊອບຂອງຕົນ |
| 9) ສະຫຼຸບລາຍງານ ການພັດທະນາຂະແໜງການ ໃນຂອບເຂດທົ່ວປະເທດໃຫ້ກະຊວງ ຍທຂ. | 9) ສະຫຼຸບລາຍງານ ການພັດທະນາຂະແໜງການ ໃນຂອບເຂດຮັບຜິດຊອບຂອງຕົນໃຫ້ແຂວງ, ນະຄອນຫຼວງວຽງຈັນ ແລະ ກະຊວງ ຍທຂ. |

ຫົວໜ້າກົມ ເຄຫາ ແລະ ຜັງເມືອງ

ຄຳທະວີ ໄທພະຈັນ

ຫົວໜ້າພະແນກ

ຫົວໜ້າພະແນກ ຍທຂ ນະຄອນຫຼວງວຽງຈັນ: ......................................

ຫົວໜ້າພະແນກ ຍທຂ ແຂວງ ຜົ້ງສາລີ : ......................................

ຫົວໜ້າພະແນກ ຍທຂ ແຂວງ ຫຼວງນ້ຳທາ : ......................................

ຫົວໜ້າພະແນກ ຍທຂ ແຂວງ ອຸດົມໄຊ : ......................................

ຫົວໜ້າພະແນກ ຍທຂ ແຂວງ ບໍ່ແກ້ວ : ......................................

ຫົວໜ້າພະແນກ ຍທຂ ແຂວງ ຫຼວງພະບາງ : ......................................

ຫົວໜ້າພະແນກ ຍທຂ ແຂວງ ຊຽງຂວາງ : ..................................

ຫົວໜ້າພະແນກ ຍທຂ ແຂວງ ຫົວພັນ : ..................................

ຫົວໜ້າພະແນກ ຍທຂ ແຂວງ ໄຊຍະບຸລີ : ..................................

ຫົວໜ້າພະແນກ ຍທຂ ແຂວງ ວຽງຈັນ : ..................................

ຫົວໜ້າພະແນກ ຍທຂ ແຂວງ ໄຊສົມບູນ : ..................................

ຫົວໜ້າພະແນກ ຍທຂ ແຂວງ ບໍລິຄໍາໄຊ : ..................................

ຫົວໜ້າພະແນກ ຍທຂ ແຂວງ ຄໍາມ່ວນ : ..................................

ຫົວໜ້າພະແນກ ຍທຂ ແຂວງ ສະຫວັນນະເຂດ: ..................................

ຫົວໜ້າພະແນກ ຍທຂ ແຂວງ ຈໍາປາສັກ : ..................................

ຫົວໜ້າພະແນກ ຍທຂ ແຂວງ ສາລະວັນ : ..................................

ຫົວໜ້າພະແນກ ຍທຂ ແຂວງ ເຊກອງ : ..................................

ຫົວໜ້າພະແນກ ຍທຂ ແຂວງອັດຕະປື : ..................................